# ການ ເດີນຂະບວນ ສາກົນ ຄັ້ງ ທີ່ ໕ ເພື່ອ ອິດສະຣະພາບ ຂອງ ຊົນເຜົ່ານ້ອຍ ແລະ ຊົນຊາດ ທີ່ ຖືກ ກົດຂີ່

*ທີ່ ເມືອງ ບາກເຊີໂລນາ, ເບີລິນ, ບຣຸກແຊລ, ປາຣີ, ໂຣມ*
*ວັນເສົາ, ທີ ໑໓ ຕຸລາ ໒໐໑໘, ໑໕ ໂມງ*

ສະມາຄົມ *Societa Libera*, ທີ່ ບໍ່ ຂຶ້ນ ກັບ ພັກ ການເມືອງ ໃດ ໃດ, ມີຈຸດປະສົງ ສົ່ງເສີມ ການປົກປ້ອງ ອິດສະຣະພາບ ໂດຍ ຍຶດຖື ວ່າ ອິດສະຣະພາບ ແມ່ນ ສິດທິ ຂອງ ແຕ່ລະ ບຸກຄົນ ແລະ ສິດທິ ໃນການ ບໍຣິຫານ ຕົນ ເອງ ຂອງ ທຸກ ທຸກ ຊົນຊາດ.

- ໂດຍ ອີງໃສ່ ນະໂຍບາຍ ແລະ ແນວທາງ ແບບ ເສຣີພາບ, ແລະ ການ ນັບຖື ສິດທິ ມະນຸດ ເປັນຫລັກ, ອົງການ *Societa Libera* ໄດ້ຈັດ ໃຫ້ມີການ ''***ເດີນ ຂະບວນ ປະທ້ວງ ສາກົນ ເພື່ອ ອິດສະຣະພາບ***'' ທີ່ ກຸງ ໂຣມ ( Rome) ມາໄດ້ ໕ ປີ ແລ້ວ. ຈຸດປະສົງ ຂອງ ການປະທ້ວງ ແບບ ''***ບໍ່ມີສຽງ***'' ເຊັ່ນນີ້ ກໍ່ແມ່ນ ເພື່ອ ຊັກຊວນ ໃຫ້ ຊາວໂລກ ຊ່ວຍກັນ ປົກປ້ອງ ອິດສະຣະພາບ ຂອງ ຊົນເຜົ່ານ້ອຍ ແລະ ຊົນຊາດ ທີ່ ຖືກ ກົດຂີ່.

- ຕໍ່ຫນ້າ ສະພາບການ ດ້ານ ສິດທິ ມະນຸດ ອັນຫນ້າ ວິຕົກ ກັງວົນ, ອົງການ *Societa Libera* ເຊື່ອແນ່ ວ່າ ຈະບໍ່ເປັນ ການພຽງພໍ ທີ່ ຈະມີການ ປະທ້ວງ ພຽງແຕ່ ກຸ່ມໃດ ກຸ່ມນຶ່ງ, ແຕ່ ກົງກັນຂ້າມ, ມັນ ເຖິງ ເວລາແລ້ວ, ທີ່ ຊາວ ຢູໂຣບ ທົ່ວ ທະວີບ ຈະຕ້ອງ ຕື່ນຕົວ, ຣູ້ສຶກ ແລະ ສຳນຶກ ເຖິງ ຫນ້າທີ່ ຂອງຕົນ, ທີ່ຈະຕ້ອງ ຊ່ວຍເຫລືອ ເພື່ອນ ມະນຸດ ດ້ວຍກັນ ນັບເປັນ ຣ້ອຍລ້ານ ຄົນ. ເຖິງ ເວລາ ແລ້ວ, ທີ່ ສະຫະພາບ ຢູໂຣບ ແລະ ອົງການ ຈັດຕັ້ງ ຕ່າງ ຕ່າງ ຈະຕ້ອງ ວາງ ມາດຕະການ ເພື່ອ ປົກປ້ອງ ກຸ່ມ ຊົນ ເຜົ່ານ້ອຍ.

- ເຖິງ ເວລາ ແລ້ວ ທີ່ ສະຫະພາບ ຢູໂຣບ ຈະຕ້ອງ ຈັດໃຫ້ມີ ''***ວັນ ຢູໂຣບ ເພື່ອ ອິດສະຣະພາບ ຂອງ ຊົນ ເຜົ່າ ນ້ອຍ ແລະ ຊົນຊາດ ທີ່ ຖືກ ກົດຂີ່ ບີບບັ້***''.

- ດ້ວຍເຫດຜົນ ດັ່ງກ່າວ, ອົງການ *Societa Libera* ຈຶ່ງໄດ້ ຣຽກຣ້ອງ ຕໍ່ ຊາວ ຢູໂຣບ, ຕໍ່ ກຸ່ມ ຊົນເຜົ່ານ້ອຍ ແລະ ຊົນຊາດ ທີ່ ຖືກ ກົດຂີ່, ແລະ ຕໍ່ ສື່ມວນຊົນ ເພື່ອ ພັກດັນ ໃຫ້ ຂະບວນ ປະທ້ວງ ຄັ້ງ ຍິ່ງໃຫຍ່ ເກີດຂຶ້ນ ຢ່າງພ້ອມພຽງກັນ, ທັ້ງນີ້ ກໍ່ ເພື່ອ ສໍ່ສະແດງ ໃຫ້ ທຸກຄົນ ຣັບຊາບ ວ່າ ການ ປົກປ້ອງ ສິດທິ ມະນຸດ ແມ່ນ ບັນຫາ ສາກົນ ທີ່ ຈະຕ້ອງ ຖືກ ແກ້ໄຂ ກ່ອນ ອື່ນຫມົດ ແລະ ຢ່າງ ຣີບດ່ວນ.

## *໕ ຫົວເມືອງ ພ້ອມກັນ ປະທ້ວງ ເພື່ອ ປົກປ້ອງ ສິດທິ ມະນຸດ*